SEARAC

ສິດທິໄດ້ຮັບການບຳບັດ: ສຸຂະພາບຈິດຂອງຊາວອະເມຣິກັນເອເຊັຍຕະເວັນອອກສ່ຽງໃຕ້ໃນຣັຖຄາລິຟໍເນັຍ

ດ້ວຍຄວາມຮ່ວມມືແລະແຮງຊຸກຍູ້ຈາກບັນດາອົງການຊ່ວຍເຫຼືອສັງຄົມຕ່າງໆ ແລະຈາກບຸກຄົນທົ່ວຣັຖ, SEARAC ໄດ້ເປີດແຜ່ເອກະສານຮອບຮວມລາຍງານເອີ້ນວ່າ ສິດທິການບຳບັດຄືນສູ່ສະພາບ (Right to Heal) ເພື່ອນຳຈຸດເດັ່ນຕ່າງໆທີ່ເປັນສິ່ງທ້າທາຍຂອງຊາວອະເມຣິກັນເອເຊັຍຕະເວັນອອກສ່ຽງໃຕ້ (SEAAs) ໃນການເຂົ້າເຖິງການບຳບັດສຸຂະພາບຈິດພາຍໃນຣັຖ ແລະເພື່ອເປັນການສະເໜີຄຳແນະນຳໃນການວາງນະໂຍບາຍທີ່ຈະແກ້ໄຂບັນຫາຄວາມຕ້ອງການໃຫ້ຊຸມຊົນ. ໃນປີ 2019 ພວກເຮົາໄດ້ເກັບກຳຄວາມເຫັນຈາກສະມາຊິກໃນຊຸມຊົນໄດ້ເກືອບ 250 ສະບັບ ແລະໄດ້ທຳການສຳຫຼວດ, ຈັບກຸ່ມສົນທະນາ, ແລະສຳພາດຜູ້ແຈ້ງເຫດທົ່ວຣັຖຄາລິຟໍເນັຍ. ຂໍ້ມູນສະຖິຕິຂອງເຮົາສະແດງໃຫ້ເຫັນວ່າ
ລະບົບການບຳບັດສຸຂະພາບຈິດແມ່ນບໍ່ເໝາະສົມ ຫຼືຄົນ (SEAAs)ເຂົ້າບໍ່ເຖິງ ແລະສ່ວນຫຼາຍແມ່ນລົ້ມເຫຼວໃນການບໍລິການຊຸມຊົນທີ່ມີຄວາມສ່ຽງເລື່ອງບັນຫາສຸຂະພາບຈິດ ແລະຄວາມຊ້ຳຝັງໃຈ ທີ່ເປັນສາເຫດມາຈາກປະສົບການ ສົງຄາມ, ການຂ້າລ້າງເຜົ່າພັນ, ແລະການເຄື່ອນຍ້າຍຖິ່ນຖານ.

ເນື້ອໃນສຳຄັນ

1. ການບຳບັດສຸຂະພາບຈິດທີ່ມີຄວາມເໝາະສົມດ້ານປະເພນີແລະພາສາ ຈຳເປັນຕ້ອງຄຳນຶງເຖິງທຸກດ້ານຂອງປະເພນີ, ການປະສົມຊາດຕິພັນ, ປະເດັນທາງແນວຄິດຕາມຍຸກສະໄໝ, ການບຳບັດ, ແລະພາສາ.
2. ການເຂົ້າເຖິງການຮັກສາທີ່ເໝາະສົມເປັນສິ່ງສຳຄັນຕໍ່ການບຳບັດ ແລະກຳຈັດວົງວຽນຄວາມຊ້ຳຝັງໃຈທີ່ສົ່ງຜົນເສັຍໄປຮອດຄົນລຸ້ນໃໝ່ໃນສັງຄົມຄົນ (SEAAs).
3. ວິທີແກ້ບັນຫາສັງຄົມທີ່ມີປະສິດຕິຜົນເພື່ອທຳລາຍອຸປະສັກການບຳບັດນັ້ນມີຢູ່ແລ້ວ, ແຕ່ມັນບໍ່ຖືກເອົາມານຳໃຊ້ເຕັມທີ່ ຫຼືບໍ່ມີການທຸ່ມເທໃສ່ໃຈເທົ່າທີ່ຄວນ.

ທ່ານຮູ້ບໍ່ວ່າ?

ຖ້າປຽບທຽບກັບຄົນທົ່ວໄປ ຄົນ(SEAAs)ປະເຊີນກັບຄວາມທ້າທາຍດ້ານບັນຫາສຸຂະພາບຈິດໃນລະດັບສູງ, ລວມເຖິງໂຣກຊຶມເສົ້າຮຸນແຮງ, PTSD (ໂຣກປ່ວຍຊ້ຳຝັງໃຈ), ແລະໂຣກວິຕົກກັງວົນ, ດ້ວຍສາເຫດມາຈາກປະສົບການສົງຄາມ, ການຂ້າລ້າງເຜົ່າພັນ, ແລະການເຄື່ອນຍ້າຍຖິ່ນຖານ.

ຜູ້ໃຫຍ່ຊາວຂະເໝນ 62% ມີອາການໂຣກປ່ວຍທາງໃຈ ປຽບທຽບກັບ 3% ຂອງຄົນທົ່ວໄປ

75% ຂອງຜູ້ຖືກກະທົບທີ່ສົ່ງຄຳຕອບຄືນມາໄດ້ແຈ້ງບອກວ່າເຂົາເຈົ້າບໍ່ເຄີຍໄດ້ຮັບບໍລິການບຳບັດສຸຂະພາບຈິດທີ່ເໝາະສົມ.

ໃນແວດວົງຜູ້ຊ່ຽວຊານໃຫ້ບໍລິການບຳບັດສຸຂະພາບຈິດທີ່ເປັນຄົນເອເຊັຍປາຊິຟິກ (APPI) ມີພຽງ 70 ຄົນ ຕໍ່ 100,000 ຄົນທີ່ເປັນຊາວ (APPI) ໃນສະຫະລັດ, ພ້ອມກັບອັດຕາສ່ວນຕໍ່າສຸດຂອງນັກບຳບັດທີ່ເວົ້າພາສາຂອງຕົນໄດ້ໃນຊຸມຊົນລາວ, ຂະເໝນ, ແລະເຜົ່າມົ້ງ ອະເມຣິກັນ.

ອະທິບາຍວິທີແກ້ບັນຫາຊຸມຊົນ

ອະທິບາຍວິທີແກ້ບັນຫາຊຸມຊົນ

- **ມັນແມ່ນຫຍັງ:** ແມ່ນວິທີການທີ່ເນັ້ນໃສ່ຈຸດແຂງຂອງຊຸມຊົນ ທີ່ຊຸກຍູ້ຄວາມໝາຍສະພາບຄວາມຢູ່ດີຕາມແນວຄິດຂອງຊຸມຊົນ ແລະຖືເອົາວັດທະນະທັມເປັນອົງປະກອບຫຼັກຂອງການປິ່ນປົວ
- **ມັນໃຊ້ໄດ້ຜົນດ້ວຍເຫດໃດ:** ວິທີການທີ່ເນັ້ນໃສ່ຈຸດແຂງຂອງຊຸມຊົນນີ້ ແນໃສ່ອົງປະກອບເຊັ່ນ ປະເພນີ, ຄວາມເຊື່ອຖືດ້ານສາສະໜາ, ການປະກອບສ່ວນສັງຄົມ, ແລະການປິ່ນປົວລະດັບຊຸມຊົນ ເພື່ອເປັນການບຳບັດຄວາມເຈັບຝັງໃຈແລະປະຫວັດສາດຂອງສັງຄົມໂດຍຮວມ

ເຈົ້າໜ້າທີ່ແລະການໃຫ້ບໍລິການສັງຄົມທີ່ເຊື່ອໃຈໄດ້

- **ມັນແມ່ນຫຍັງ:** ແມ່ນການໃຫ້ບໍລິການທີ່ມີສູນຕັ້ງໃນສະຖານທີ່ຮ່ວມກັນ ພ້ອມກັບການປິ່ນປົວສຸຂະພາບຈິດໃຈ ທີ່ລວມເອົາການໂຄສະນາ/ຂະຫຍາຍໂຕ ແລະການສອນຄວາມຮູ້ ພ້ອມທັ້ງວິທີແກ້ບັນຫາທີ່ແຫວກໃໝ່

- **ມັນໃຊ້ໄດ້ຜົນດ້ວຍເຫດໃດ:** ການໃຫ້ບໍລິການທີ່ຕັ້ງຢູ່ພາຍໃນຊຸມຊົນຊ່ວຍໃຫ້ເຮົາຢ່າງຂ້າມຄວາມຮູ້ສຶກທີ່ເປັນມົນທິນ/ເສື່ອມເສັຍຊື່ສຽງ, ຊ່ວຍສ້າງຄວາມໄວ້ໃຈຕໍ່ນັກບໍາບັດ, ແລະເພີ່ມຄວາມເຂົ້າໃຈໃນຫົວຂໍ້ບັນຫາສຸຂະພາບຈິດ ແລະລະບົບການປິ່ນປົວໃນປະຈຸບັນ

ຄວາມສະເໝີພາບດ້ານພາສາ

- **ມັນແມ່ນຫຍັງ:** ແມ່ນກົດລະບຽບຂອງການໃຫ້ບໍລິການສຸຂະພາບຈິດໂດຍຕັ້ງໃສ່ພື້ນຖານວັດທະນະທັມແລະພາສາ ທີ່ຮອງຮັບມາດຕະຖານສິດທິມະນຸດໃນຄວາມເຂົ້າໃຈ ການລະບາຍ ແລະການໄດ້ຖືກຮັບຮູ້
- **ມັນໃຊ້ໄດ້ຜົນດ້ວຍເຫດໃດ:** ການແກ້ໄຂອຸປະສັກໃຫ້ຊຸມຊົນທີ່ໃຫຍ່ທີ່ສຸດໃນຣັຖຄາລິຟໍເນັຍທີ່ມີບັນຫາດ້ານພາສາ ຈະຊ່ວຍສ້າງຄວາມໄວ້ໃຈໃນຂະນະດຽວກັນກັບຫຼຸດຜ່ອນການຈໍາແນກ, ກົ່ກວນ, ກົດດັນໃຫ້ນໍາໃຊ້ວິທີການທົ່ວໄປ, ແລະແບ່ງເບົາຄວາມຈໍາເປັນທີ່ເດັກນ້ອຍຕ້ອງອາງໂຕເປັນຕົວເຊື່ອມ/ນາຍພາສາ ກັບລະບົບສະຫວັດດີການສັງຄົມ; ພ້ອມກັນນີ້ ມັນຍັງຊ່ວຍສ້າງຄວາມໄວ້ໃຈໃນການແບ່ງປັນຂໍ້ມູນ, ລະບາຍ/ສົນທະນາເລື່ອງລາວທີ່ລະອຽດອ່ອນ, ແລະເຂົ້າເຖິງການບໍລິການ, ບໍ່ວ່າຈະເປັນດ້ານການມີນັກປິ່ນປົວທີ່ເວົ້າພາສາກັນເອງໄດ້, ມີເອກະສານທີ່ໄດ້ຮັບການແປ, ຫຼືມີນາຍພາສາທີ່ມີປະສິດທິພາບ.

This project was funded by the California Endowment. For a full list of references and acknowledgements, please see the full report at: **bit.ly/SEARACRight2Heal2021**

ສຽງຈາກຊຸມຊົນ

"ໃນຖານະທີ່ເປັນນາຍພາສາຂຶ້ນທະບຽນກັບຕຸລາສານຂອງຣັຖຄາລິຟໍເນັຍ ແລະເປັນລູກຫຼານຊາວລາວອົບພະຍົບ ຂ້າພະເຈົ້າຮູ້ດີກັບຄວາມລໍາບາກທີ່ຕອນຍັງນ້ອຍຕ້ອງຫຼິ້ນບົດບາດເປັນນາຍພາສາໃຫ້ພໍ່ແມ່ຜູ້ເພິ່ນບໍ່ເຂົ້າໃຈພາສາອັງກິດ ເພິ່ນມີບັນຫາດ້ານສຸຂະພາບຈິດໂດຍບໍ່ຮູ້ວິທີແກ້ໄຂ ແລະຮອດບໍ່ຮູ້ວ່າເພິ່ນປ່ວຍໃຈ. ມັນເລີຍກາຍເປັນບັນຫາໃນຄອບຄົວທີ່ບໍ່ເຄີຍໄດ້ຮັບການແກ້ໄຂ ເປັນເຫດໃຫ້ມີການໃຊ້ຄວາມຮຸນແຮງ ຜິດຖຽງ ແລະບໍ່ເຂົ້າໃຈກັນມາໂດຍຕະຫຼອດ. ຂ້າພະເຈົ້າຕ້ອງບັງຄັບໃຫ້ໂຕເອງຮຽນຮູ້ພາສາອັງກິດໄວໆ ແລະພາສາລາວເອງກໍບໍ່ແຂງພໍສໍາລັບການແປໃຫ້ພໍ່ແມ່ເຂົ້າໃຈເຕັມທີ່ ເລີຍເຮັດໃຫ້ເພິ່ນຕ້ອງເອົາຕາມມີຕາມເກີດ ບໍ່ໄດ້ຮັບບໍລິການດ້ານສະຫວັດດີການສັງຄົມຢ່າງເຕັມທີ່. ໃນປະຈະບັນຂ້າພະເຈົ້າໄດ້ຝຶກພາສາລາວໃຫ້ເກັ່ງຂຶ້ນເພື່ອເປັນນາຍພາສາທີ່ມີປະສິຕິພາບ ເປັນການຊ່ວຍເຫຼືອໃຫ້ຊາວລາວໄດ້ເຂົ້າເຖິງລະບົບຕ່າງໆ. ໃນຖານະນີ້ ຂ້າພະເຈົ້າເຫັນຄົນລາວຈໍານວນຫຼາຍບໍ່ສາມາດເຮັດຕາມຄໍາສັ່ງສານ ເວລາທີ່ຖືກກໍານົດໃຫ້ເຂົ້າຮັບການບໍາບັດດ້ານສຸຂະພານຈິດແລະຄໍາແນະນໍາຈາກຜູ້ຊ່ຽວຊານ ເພາະເຂົາເຈົ້າບໍ່ເກັ່ງພາສາອັງກິດ ແລະວິທີການປິ່ນປົວແລະຄໍາແນະນໍາບໍ່ສອດຄ່ອງກັບປະເພນີຂອງຄົນລາວ ເຮັດໃຫ້ເປັນການເສັຍເວລາແລະຜູ້ກ່ຽວບໍ່ໄດ້ຮັບຜົນປະໂຫຍດຈາກການບໍລິການຕາມເປົ້າໝາຍເປັນເຫດເຮັດໃຫ້ການພົວພັນກັບລະບົບສານມີບັນຫາເພີ່ມຂຶ້ນ"

ມາລີ ພິມມະວົງ, ເມືອງແຊກກຣະເມັນໂຕ